# ສຳເລັດສຳມະນາດ້ານວິຊາການ ຂອງສາມອົງການຈັດຕັ້ງມະຫາຊົນ ຮາກຖານ ທຫລ




ໃນວັນທີ 16 ກຸມພາ 2022 ນີ້, ຕາງໜ້າສະຫະພັນແມ່ຍິງຮາກຖານ ທຫລ ນຳໂດຍ ທ່ານ ນ. ໄພທູນ ກິ່ງແກ້ວ, ຮອງປະທານສະຫະພັນແມ່ຍິງ ທຫລ, ປະທານຄະນະສະຫະພັນແມ່ຍິງຮາກຖານ ທຫລ, ຮອງຫົວໜ້າກົມບັນຊີ ແລະ ການເງິນ ທຫລ ພ້ອມດ້ວຍຄະນະ ໄດ້ສຳເລັດການຈັດສຳມະນາແລກປ່ຽນບົດຮຽນວິຊາການ ຜ່ານລະບົບອອນລາຍ, ມີຕາງໜ້າຈາກຄະນະສະຫະພັນກຳມະບານຮາກຖານ ທຫລ, ຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ ແລະ ບັນດາສະມາຊິກສາມອົງການຈັດຕັ້ງມະຫາຊົນ ພາຍໃນ ທຫລ ເຂົ້າຮ່ວມ 269 ສະຫາຍ.



ຈຸດປະສົງຂອງການຈັດສຳມະນາໃນຄັ້ງນີ້, ແມ່ນເພື່ອສ້າງຂະບວນການຂ່ຳນັບຮັບຕ້ອນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ແລະ ວັນແມ່ຍິງສາກົນ ວັນທີ 8 ມີນາ 2022 ທີ່ຈະມາເຖິງນີ້, ທັງເປັນການສ້າງຄວາມເຂົ້າໃຈໃຫ້ແກ່ບັນດາສະມາຊິກສາມອົງການຈັດຕັ້ງມະຫາຊົນຮາກຖານ ທຫລ ໄດ້ມີຄວາມເປັນເອກະພາບກັນໃນການຮັບຮູ້, ເຂົ້າໃຈລະອຽດ, ຈະແຈ້ງ ກ່ຽວກັບວຽກງານສະກຸນເງິນດິຈິຕອນຂອງທະນາຄານກາງ ແລະ ວິທີການສັງເກດທະນະບັດແທ້-ປອມ ສະກຸນເງິນກີບ, ສະກຸນເງິນໂດລາສະຫະລັດ ແລະ ບາດໄທ. ພ້ອມນີ້, ກໍ່ໄດ້ມີການປຶກສາຫາລື ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ລະຫວ່າງ ນັກສຳມະນາກອນ ແລະ ວິທະຍາກອນ ໃນຫຼາຍປະເດັນທີ່ສຳຄັນ ທັງນີ້ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານດັ່ງກ່າວໃຫ້ເລິກເຊິ່ງຂຶ້ນຕື່ມ.

❖ **ຂ່າວ-ພາບ: ທ ສົມພິດ ທຳມະວົງ**

*ຢູ່ເມືອງລາວໃຊ້ແຕ່ເງິນກີບລາວ*